# ປະກາດຮັບສະໝັກພະນັກງານຫຼາຍຕຳແໜ່ງ (ດ່ວນ)

ບໍລິສັດ ລ້ານຊ້າງປະກັນໄພ ມະຫາຊົນ (LAP) ເປັນໜຶ່ງບໍລິສັດປະກັນໄພແຖວໜ້າໃນ ສ ປປ ລາວ ສ້າງຕັ້ງຂຶ້ນໃນວັນທີ 11/10/2010. ຕະຫຼອດໄລຍະ 15 ປີແຫ່ງການເຄື່ອນໄຫວ ແລະ ພັດທະນາ, ປັດຈຸບັນບໍລິສັດ ລ້ານຊ້າງປະກັນໄພ ມະຫາຊົນ ເປັນບໍລິສັດທີ່ມີທ່າກ້າວ, ຂະຫຍາຍຕົວຂຶ້ນຢ່າງວ່ອງໄວ ແລະ ໄດ້ມີເຄືອຂ່າຍຕົວແທນ ແລະ ຄູ່ຮ່ວມທຸລະກິດຂາຍປະກັນໄພ ແລະ ຕາໜ່າງການບໍລິການກະຈາຍທົ່ວປະເທດຢ່າງກ້ວາງຂວາງ. ເພື່ອຮອງຮັບກັບການໃຫ້ບໍລິການແກ່ລູກຄ້າໃຫ້ທັນກັບສະພາບການໃນທຸກຂົງເຂດ, ບໍລິສັດ ລ້ານຊ້າງປະກັນໄພ ຈຶ່ງມີຄວາມຕ້ອງການຮັບສະໝັກພະນັກງານເພີ່ມດັ່ງລຸ່ມນີ້:

## I. ຕຳແໜ່ງຮັບສະໝັກ:

| ລດ | ຕຳແໜ່ງ | ຈຳນວນ | ໜ້າທີ່ຕ້ອງປະຕິບັດ | ເງື່ອນໄຂໃນການສະໝັກ | ສິດຜົນປະໂຫຍດຈະໄດ້ຮັບ |
|---|---|---|---|---|---|
| **1** | **ຫົວໜ້າພະແນກ ບັນຊີ-ການເງິນ** | **1 ຕຳແໜ່ງ** | • ຈັດຕັ້ງປະຕິບັດ ແລະ ຊີ້ນຳລວມວຽກງານບັນຊີ ແລະ ການເງິນຂອງບໍລິສັດທັງໝົດ.<br>• ສ້າງບົດລາຍງານການເງິນ, ລາຍງານສະຫຼຸບບັນຊີປະຈຳແຕ່ລະໄລຍະ.<br>• ຄຸ້ມຄອງວຽກງານຄ່າໃຊ້ຈ່າຍ, ໜີ້ສິນ (ຕ້ອງຮັບ , ຕ້ອງຈ່າຍ, ໜີ້ລ່ວງໜ້າ...) ແລະ ກະແສເງິນສົດ.<br>• ເຮັດວຽກຮ່ວມກັບພາກສ່ວນກວດສອບບັນຊີ ແລະ ພາກສ່ວນອາກອນ.<br>• ວຽກງານຄຸ້ມຄອງ ແລະ ພົວພັນກັບຜູ້ຖືຮຸ້ນ<br>• ແລະ ວຽກງານອື່ນໆຕາມການມອບໝາຍຈາກບໍລິສັດ. | • ເພດຍິງ ຫຼື ຊາຍ ອາຍຸບໍ່ເກີນ 45 ປີ<br>• ຈົບປະລິນຍາຕີຂຶ້ນໄປ ສາຂາບັນຊີ/ການເງິນ.<br>• **ມີໃບຢັ້ງຢືນ CPA ຫຼືກຳລັງຮຽນຢູ່ ຈະພິຈາລະນາພິເສດ.**<br>• ມີປະສົບການດ້ານບັນຊີຢ່າງໜ້ອຍ 5 ປີ, ດຳລົງຕຳແໜ່ງຫົວໜ້າພະແນກ/ຮອງພະແນກ ຢ່າງໜ້ອຍ 2 ປີ.<br>• ເຂົ້າໃຈຢ່າງເລິກເຊິ່ງ ລື ສາມາດສຶກສາກ່ຽວກັບມາດຕະຖານການບັນຊີ, ກົດ ໝາຍອາກອນ, ກົດໝາຍການປະກັນໄພ.<br>• ຊຳນານໃນການໃຊ້ພາສາອັງກິດ **ຈະພິຈາລະນາພິເສດ**<br>• ມີຈັນຍາບັນ ແລະ ຄວາມສັດຊື່ໃນອາຊີບ. | • ລາຍຮັບ: ຕາມການເຈລະຈາຕົວຈິງເວລາສຳພາດ.<br>• ມີປະກັນສັງຄົມ, ປະກັນສຸຂະພາບ<br>• ອຸດໜູນກິນເຂົ້າທ່ຽງ, ອຸດໜູນເດີນທາງໄປວຽກຕ່າງແຂວງ-ຕ່າງປະເທດ, ຄ່າໂທລະສັບທຸກເດືອນ<br>• ຂຶ້ນເງິນເດືອນ, ເງິນໂບນັສ ຕາມຄວາມສຳເລັດຂອງທຸລະກິດ.<br>• ກວດສຸຂະພາບຮອບດ້ານທຸກໆປີ ແລະໄດ້ໄປທ່ອງທ່ຽວຕາມແຜນຂອງບໍລິສັດ.<br>• ໄດ້ເຂົ້າຮ່ວມບັນດາໂຄງການ, ການຝຶກອົບຮົມເພື່ອພັດທະນາໂຕເອງ.<br>• ແລະ ອີກຫຼາຍໆນະໂຍບາຍອື່ນຈາກ LAP ເຊັ່ນ: ເງິນເດືອນ 13, ລາງວັນທ້າຍປີ, ອຸດໜູນບັນດາເທດສະການ, ວັນເກີດ, ເກີດລູກ, ເຈັບໄຂ້, ຊຸດເຄື່ອງແບບພະນັກງານ.... |

| | | | | | |
|---|---|---|---|---|---|
| | | | | • ມີທັກສະໃນການສື່ສານ, ທັກສະຄວາມເປັນຜູ້ນຳ ແລະ ນຳພາທີມງານໄດ້ດີ. | • ມີວັນພັກປະຈຳປີ, ພັກເທດສະການ, ພັກກິດທຸລະ, ລາປ່ວຍ ຕາມກົດໝາຍແຮງງານກຳນົດ.<br>• ມີວຽກງານທີ່ໝັ້ນຄົງ.<br>• ໄດ້ຮັບມິດຕະພາບທີ່ດີ, ມີຄວາມທ້າທາຍ, ເຮັດວຽກແບບມືອາຊີບ ແລະ ສະພາບແວດລ້ອມແບບສາກົນ. |
| **2** | **ພະນັກງານພະແນກບັນຊີ-ການເງິນ** | **3 ຕຳແໜ່ງ** | • ບັນທຶກລາຍການຮັບ–ຈ່າຍປະຈຳວັນ.<br>• ຄຸ້ມຄອງ, ຈັດເກັບ ແລະ ກວດກາ ເອກະສານລົງບັນຊີທີ່ຕົນຮັບຜິດຊອບ.<br>• ສົມທຽບ, ຫຼອກກ່າຍ ແລະ ກະທົບຍອດ ຍອດເງິນຝາກທະນາຄານ(Bank Reconciliation) ແລະ ບັນຊີລໍຖ້າຕ່າງໆ.<br>• ຊ່ວຍການກຽມຂໍ້ມູນສຳລັບບົດລາຍງານການເງິນ.<br>• ປະຕິບັດວຽກງານອື່ນໆຕາມທີ່ໄດ້ຮັບມອບໝາຍຈາກບໍລິສັດ. | • ເພດຍິງ ຫຼື ຊາຍ ອາຍຸບໍ່ເກີນ 35 ປີ<br>• ຈົບຊັ້ນສູງຂຶ້ນໄປ ສາຂາບັນຊີ/ການເງິນ, ການທະນາຄານ ຫຼື ສາຂາອື່ນທີ່ກ່ຽວຂ້ອງ.<br>• ມີປະສົບການສາຍງານທີ່ກ່ຽວຂ້ອງ**ຈະພິຈາລະນາພິເສດ.** .<br>• ມີຄວາມລະມັດລະວັງ, ຊື່ສັດ, ມະນຸດສຳພັນດີ.<br>• ມີທັກສະໃນການສື່ສານ, ທັກສະການແກ້ໄຂບັນຫາ, ທັກສະໃນການເຈລະຈາ. | • ລາຍຮັບ: ຕາມການເຈລະຈາຕົວຈິງເວລາສຳພາດ.<br>• ມີປະກັນສັງຄົມ, ປະກັນສຸຂະພາບ<br>• ອຸດໜູນກິນເຂົ້າທ່ຽງ, ອຸດໜູນເດີນທາງໄປວຽກຕ່າງແຂວງ-ຕ່າງປະເທດ, ຄ່າໂທລະສັບທຸກເດືອນ<br>• ຂຶ້ນເງິນເດືອນ, ເງິນໂບນັສ ຕາມຄວາມສຳເລັດຂອງທຸລະກິດ.<br>• ກວດສຸຂະພາບຮອບດ້ານທຸກໆປີ ແລະໄດ້ໄປທ່ອງທ່ຽວຕາມແຜນຂອງບໍລິສັດ.<br>• ໄດ້ເຂົ້າຮ່ວມບັນດາໂຄງການ, ການຝຶກອົບຮົມເພື່ອພັດທະນາໂຕເອງ.<br>• ແລະ ອີກຫຼາຍໆນະໂຍບາຍອື່ນຈາກ LAP ເຊັ່ນ: ເງິນເດືອນ 13, ລາງວັນທ້າຍປີ, ອຸດໜູນບັນດາເທດສະການ, ວັນເກີດ, ເກີດລູກ, ເຈັບໄຂ້, ຊຸດເຄື່ອງແບບພະນັກງານ....<br>• ມີວັນພັກປະຈຳປີ, ພັກເທດສະການ, ພັກກິດທຸລະ, ລາປ່ວຍ ຕາມກົດໝາຍແຮງງານກຳນົດ.<br>• ມີວຽກງານທີ່ໝັ້ນຄົງ.<br>• ໄດ້ຮັບມິດຕະພາບທີ່ດີ, ມີຄວາມທ້າທາຍ, ເຮັດວຽກແບບມືອາຊີບ ແລະ ສະພາບແວດລ້ອມແບບສາກົນ. |
| **3** | **ພະນັກງານຄຸ້ມຄອງການຂາຍ** | **3 ຕຳແໜ່ງ** | • ແຈ້ງນະໂຍບາຍຂາຍ ແລະ ເປົ້າໝາຍ ແກ່ຕົວແທນ/ຄູ່ຮ່ວມທຸລະກິດ ທີ່ໄດ້ຮັບຄຸ້ມຄອງ.<br>• ພັດທະນາຊ່ອງທາງການຂາຍ ດ້ວຍການຮັບສະໝັກຕົວແທນຂາຍ ແລະ ຝຶກອົບຮົມ. | • ເພດຍິງ ຫຼື ຊາຍ ອາຍຸບໍ່ເກີນ 40 ປີ<br>• ຈົບຊັ້ນສູງຂຶ້ນໄປຂະແໜງ ເສດຖະສາດບໍລິຫານທຸລະກິດ, ການເງິນທະນາຄານ ຫຼື ສາຂາອື່ນໆທີ່ກ່ຽວຂ້ອງ | • ລາຍຮັບ: ຕາມການເຈລະຈາຕົວຈິງເວລາສຳພາດ.<br>• ມີປະກັນສັງຄົມ, ປະກັນສຸຂະພາບ<br>• ອຸດໜູນກິນເຂົ້າທ່ຽງ, ອຸດໜູນເດີນທາງໄປວຽກຕ່າງແຂວງ-ຕ່າງປະເທດ, ຄ່າໂທລະສັບທຸກເດືອນ |

| | | | | | |
|---|---|---|---|---|---|
| | | | • ຄຸ້ມຄອງການຂາຍ, ຕິດຕາມການຕໍ່ສັນຍາ<br>• ຂຶ້ນແຜນລົງພົບຕົວແທນ ແລະ ຄູ່ຮ່ວມທຸລະກິດ.<br>• ຕິດຕາມລາຍຮັບ ຮັບປະກັນການດຳເນີນການຂາຍເປັນໄປຕາມລະບົບທີ່ບໍລິສັດກຳໜົດ. | • ມີມະນຸດສຳພັນດີ, ມີທັກສະໃນການເຈລະຈາ, ການສື່ສານທີ່ດີ.<br>• ມີຄວາມອົດທົນ ແລະ ມີຄວາມຊື່ສັດ<br>• ມີຄວາມອົດທົນຕໍ່ສະພາບຄວາມກົດດັນໃນໜ້າວຽກສູງ.<br>• ກຽມພ້ອມເຮັດວຽກນອກໂມງ ແລະ ສາມາດໄປວຽກຕ່າງແຂວງ<br>• ມີປະສົບການໃນສາຍງານທີ່ກ່ຽວຂ້ອງ**ຈະພິຈາລະນາເປັນພິເສດ** | • ຂຶ້ນເງິນເດືອນ, ເງິນໂບນັສ ຕາມຄວາມສຳເລັດຂອງທຸລະກິດ.<br>• ກວດສຸຂະພາບຮອບດ້ານທຸກໆປີ ແລະໄດ້ໄປທ່ອງທ່ຽວຕາມແຜນຂອງບໍລິສັດ.<br>• ໄດ້ເຂົ້າຮ່ວມບັນດາໂຄງການ, ການຝຶກອົບຮົມເພື່ອພັດທະນາໂຕເອງ.<br>• ແລະ ອີກຫຼາຍໆນະໂຍບາຍອື່ນຈາກ LAP ເຊັ່ນ: ເງິນເດືອນ 13, ລາງວັນທ້າຍປີ, ອຸດໜູນບັນດາເທດສະການ, ວັນເກີດ, ເກີດລູກ, ເຈັບໄຂ້, ຊຸດເຄື່ອງແບບພະນັກງານ....<br>• ມີວັນພັກປະຈຳປີ, ພັກເທດສະການ, ພັກກິດທຸລະ, ລາປ່ວຍ ຕາມກົດໝາຍແຮງງານກຳນົດ.<br>• ມີວຽກງານທີ່ໝັ້ນຄົງ.<br>• ໄດ້ຮັບມິດຕະພາບທີ່ດີ, ມີຄວາມທ້າທາຍ, ເຮັດວຽກແບບມືອາຊີບ ແລະ ສະພາບແວດລ້ອມແບບສາກົນ. |
| **4** | **ພະນັກງານພະແນກຄຸ້ມຄອງວິຊາການປະກັນໄພ** | **3 ຕຳແໜ່ງ** | • ຮັບຜິດຊອບວຽກງານວິຊາການຂອງ ປະກັນໄພປະເພດຕ່າງໆ;<br>• ສ້າງແຜນປະຈຳປີ, ປະຈຳໄຕມາດ, ປະຈຳເດືອນກັບຜູ້ຈັດການ/ຄະນະພະແນກ.<br>• ຮ່ວມພັດທະນາຜະລິດຕະພັນກ່ຽວກັບ ປະກັນໄພ ເພື່ອຈຳໜ່າຍໃນຊ່ອງທາງຕ່າງໆຕາມແຜນການທີ່ກຳໜົດ;<br>• ຄຸ້ມຄອງສັນຍາປະກັນໄພ.<br>• ຊັບພອດພະແນກຂາຍ ດ້ານການອອກໃບສະເໜີລາຄາປະກັນໄພປະເພດຕ່າງໆ;<br>• ສັງລວມເອກະສານ ແລະ ເຄື່ອງມືຕ່າງໆ ທີ່ກ່ຽວຂ້ອງທັງໝົດເກັບມ້ຽນໄວ້ໃນຖານຂໍ້ມູນຢ່າງເປັນລະບົບລະບຽບ. | • ເພດຍິງ ຫຼື ຊາຍ ອາຍຸບໍ່ເກີນ 40 ປີ<br>• ຈົບຊັ້ນສູງຂຶ້ນໄປຂະແໜງ ເສດຖະສາດ ບໍລິຫານທຸລະກິດ, ການເງິນທະນາຄານ ຫຼື ສາຂາອື່ນໆທີ່ກ່ຽວຂ້ອງ<br>• ມີມະນຸດສຳພັນດີ, ມີທັກສະໃນການເຈລະຈາ<br>• ອົດທົນ ແລະ ມີຄວາມຊື່ສັດ<br>• ມີຄວາມອົດທົນຕໍ່ສະພາບຄວາມກົດດັນໃນໜ້າວຽກສູງ.<br>• ກຽມພ້ອມເຮັດວຽກນອກໂມງ ແລະ ສາມາດໄປວຽກຕ່າງແຂວງ<br>• ຊຳນານໃນການໃຊ້ພາສາອັງກິດ **ຈະພິຈາລະນາພິເສດ** | • ລາຍຮັບ: ຕາມການເຈລະຈາຕົວຈິງເວລາສຳພາດ.<br>• ມີປະກັນສັງຄົມ, ປະກັນສຸຂະພາບ<br>• ອຸດໜູນກິນເຂົ້າທ່ຽງ, ອຸດໜູນເດີນທາງໄປວຽກຕ່າງແຂວງ-ຕ່າງປະເທດ, ຄ່າໂທລະສັບທຸກເດືອນ<br>• ຂຶ້ນເງິນເດືອນ, ເງິນໂບນັສ ຕາມຄວາມສຳເລັດຂອງທຸລະກິດ.<br>• ກວດສຸຂະພາບຮອບດ້ານທຸກໆປີ ແລະໄດ້ໄປທ່ອງທ່ຽວຕາມແຜນຂອງບໍລິສັດ.<br>• ໄດ້ເຂົ້າຮ່ວມບັນດາໂຄງການ, ການຝຶກອົບຮົມເພື່ອພັດທະນາໂຕເອງ.<br>• ແລະ ອີກຫຼາຍໆນະໂຍບາຍອື່ນຈາກ LAP ເຊັ່ນ: ເງິນເດືອນ 13, ລາງວັນທ້າຍປີ, ອຸດໜູນບັນດາເທດສະການ, ວັນເກີດ, ເກີດລູກ, ເຈັບໄຂ້, ຊຸດເຄື່ອງແບບພະນັກງານ.... |

| | | | | | |
|---|---|---|---|---|---|
| | | | • ຕິດຕາມ, ຊ່ວຍ ແລະ ເປັນຜູ້ເຝິກອົບຮົມປະກັນໄພ ແກ່ທີມງານຂາຍ ຫຼື ແກ່ຜູ້ຂາຍອື່ນໆ; | • ມີປະສົບການໃນວຽກງານທີ່ກ່ຽວຂ້ອງ**ຈະພິຈາລະນາເປັນພິເສດ** | • ມີວັນພັກປະຈຳປີ, ພັກເທດສະການ, ພັກກິດທຸລະ, ລາປ່ວຍ ຕາມກົດໝາຍແຮງງານກຳນົດ.<br>• ມີວຽກງານທີ່ໝັ້ນຄົງ.<br>• ໄດ້ຮັບມິດຕະພາບທີ່ດີ, ມີຄວາມທ້າທາຍ, ເຮັດວຽກແບບມືອາຊີບ ແລະ ສະພາບແວດລ້ອມແບບສາກົນ. |
| **5** | **ພະນັກງານ IT Programer and Infrastructure** | **2 ຕຳແໜ່ງ** | **ກ. ຄຸ້ມຄອງໂຄງສ້າງພື້ນຖານເຊີບເວີ ແລະ ໄອທີ**<br>• ຄຸ້ມຄອງ, ຕິດຕັ້ງ, ຕັ້ງຄ່າ ແລະ ດຳເນີນງານລະບົບເຊີບເວີ.<br>• ຕິດຕາມກວດກາປະສິດທິພາບຂອງລະບົບ (CPU, RAM, Storage, Network) ແລະ ແກ້ໄຂບັນຫາຕ່າງໆຢ່າງວ່ອງໄວ.<br>• ປະຕິບັດການສຳຮອງຂໍ້ມູນ ແລະ ການກູ້ຄືນຂໍ້ມູນເປັນປະຈຳ, ຮັບປະກັນຄວາມປອດໄພຂອງຂໍ້ມູນ.<br>**ຂ. ການຄຸ້ມຄອງ ແລະ ການພັດທະນາຊອບແວ**<br>• ຄຸ້ມຄອງລະບົບຊອບແວພາຍໃນ (ລະບົບການຂາຍ, ລະບົບບັນຊີ...).<br>• ພັດທະນາ, ດັດແກ້ ຫຼື ອັບເກຣດແອັບພລິເຄຊັນຕາມຄວາມຕ້ອງການຂອງບໍລິສັດ.<br>• ຮ່ວມມືກັບພະແນກອື່ນໆເພື່ອວິເຄາະຄວາມຕ້ອງການດ້ານວິຊາສະເພາະ ແລະ ສະເໜີວິທີແກ້ໄຂດ້ານເທັກໂນໂລຍີ.<br>• ເພີ່ມປະສິດທິພາບປະສິດທິພາບຂອງຊອບແວ, ຄວາມປອດໄພ, ແລະ ຄວາມໝັ້ນຄົງ.<br>**ຄ. ຄວາມປອດໄພຂໍ້ມູນ ແລະ ຄວາມປອດໄພທາງໄຊເບີ** | • ເພດ: ຊາຍ, ອາຍຸບໍ່ເກີນ 40 ປີ<br>• ຈົບການສຶກຊັ້ນສູງຂຶ້ນໄປໃນສາຂາ IT ຫຼື ສາຂາທີ່ກ່ຽວຂ້ອງ.<br>• ມີຄວາມຮູ້ພື້ນຖານດ້ານ Windows Server.<br>• ມີຄວາມຮູ້ກ່ຽວກັບການຮັກສາຄວາມລັບລະບົບ, ອິນເຕີເນັດຄອມພິວເຕີ.<br>• **ບຸລິມະສິດພິເສດ:**<br>- ***ສຳລັບຜູ້ສະໝັກທີ່ມີປະສົບການ 1-2 ປີ ໃນຕຳແໜ່ງ ການຄຸ້ມຄອງລະບົບເຊີເວີ, ລະບົບໂປແກມ.***<br>- ***ຊຳນານໃນການໃຊ້ພາສາອັງກິດ***<br>• ທັກສະການແກ້ໄຂບັນຫາໄວ, ແນວຄວາມຄິດຢ່າງເປັນລະບົບ, ມີຄວາມລະມັດລະວັງ.<br>• ມີຄວາມຮັບຜິດຊອບສູງ, ມີຄວາມເປັນເຈົ້າການ, ຊ່ວຍເຫຼືອທີມງານໄດ້ດີ.<br>• ຄວາມສາມາດໃນການສື່ສານແລະອະທິບາຍບັນຫາດ້ານວິຊາການໃຫ້ກັບຜູ້ທີ່ບໍ່ຊຳນານ. | • ລາຍຮັບ: ຕາມການເຈລະຈາຕົວຈິງເວລາສຳພາດ.<br>• ມີປະກັນສັງຄົມ, ປະກັນສຸຂະພາບ<br>• ອຸດໜູນກິນເຂົ້າທ່ຽງ, ອຸດໜູນເດີນທາງໄປວຽກຕ່າງແຂວງ-ຕ່າງປະເທດ, ຄ່າໂທລະສັບທຸກເດືອນ<br>• ຂຶ້ນເງິນເດືອນ, ເງິນໂບນັສ ຕາມຄວາມສຳເລັດຂອງທຸລະກິດ.<br>• ກວດສຸຂະພາບຮອບດ້ານທຸກໆປີ ແລະໄດ້ໄປທ່ອງທ່ຽວຕາມແຜນຂອງບໍລິສັດ.<br>• ໄດ້ເຂົ້າຮ່ວມບັນດາໂຄງການ, ການຝຶກອົບຮົມເພື່ອພັດທະນາໂຕເອງ.<br>• ແລະ ອີກຫຼາຍໆນະໂຍບາຍອື່ນຈາກ LAP ເຊັ່ນ: ເງິນເດືອນ 13, ລາງວັນທ້າຍປີ, ອຸດໜຸນບັນດາເທດສະການ, ວັນເກີດ, ເກີດລູກ, ເຈັບໄຂ້, ຊຸດເຄື່ອງແບບພະນັກງານ....<br>• ມີວັນພັກປະຈຳປີ, ພັກເທດສະການ, ພັກກິດທຸລະ, ລາປ່ວຍ ຕາມກົດໝາຍແຮງງານກຳນົດ.<br>• ມີວຽກງານທີ່ໝັ້ນຄົງ.<br>• ໄດ້ຮັບມິດຕະພາບທີ່ດີ, ມີຄວາມທ້າທາຍ, ເຮັດວຽກແບບມືອາຊີບ ແລະ ສະພາບແວດລ້ອມແບບສາກົນ. |

| | | | | | |
|---|---|---|---|---|---|
| | | | • ຈັດຕັ້ງປະຕິບັດວິທີແກ້ໄຂຄວາມປອດໄພຂອງລະບົບ, ລວມທັງການປ້ອງກັນໄວຣັສ ແລະ ການໂຈມຕີທາງໄຊເບີ.<br>• ພັດທະນາ ແລະ ປະຕິບັດຕາມຂັ້ນຕອນ ແລະ ນະໂຍບາຍຄວາມປອດໄພດ້ານໄອທີ.<br>**ງ. ການສະໜັບສະໜູນດ້ານວິຊາການ ແລະ ການບໍລິຫານລະບົບ**<br>• ໃຫ້ການສະໜັບສະໜູນດ້ານວິຊາການແກ່ຜູ້ໃຊ້ພາຍໃນເມື່ອບັນຫາທີ່ກ່ຽວຂ້ອງກັບຊອບແວ ແລະ ລະບົບເກີດຂຶ້ນ.<br>• ການຄຸ້ມຄອງບັນຊີຜູ້ໃຊ້ ແລະ ການອະນຸຍາດເຂົ້າເຖິງລະບົບ.<br>ຈ. ໜ້າວຽກອື່ນໆຕາມການມອບໝາຍຈາກບໍລິສັດ | | |
| **6** | **ພະນັກງານ Marketing ສາຍງານ Content Creater** | **2 ຕໍາແໜ່ງ** | • ສ້າງ ແລະ ປະຕິບັດແຜນການບັນດາລາຍການໂຄສະນາພາຍໃນ<br>• ອອກແນວຄວາມຄິດ, ນໍາສະເໜີ ແລະ ຜັນຂະຫຍາຍບົດຄວາມໂຄສະນາຜ່ານສື່ຕ່າງໆ (ດ້ວຍຄິບວີດີໂອ, ດ້ວຍບົດຄວາມ...)<br>• ລາຍງານໝາກຜົນບັນດາລາຍການໂຄສະນາ ແລະ ແນວທາງແກ້ໄຂເພື່ອການໂຄສະນາຈະໄດ້ປະສິດທິຜົນຫຼາຍຂຶ້ນ.<br>• ຜັນຂະຫຍາຍລາຍການເຄື່ອນໄຫວຮ່ວມມື, ພົວພັນສາທາລະນະ ແລະ ລາຍການຊ່ວຍເຫຼືອສັງຄົມ.<br>• ປະຕິບັດວຽກງານເຜີຍແຜ່ວັດທະນະທໍາອົງກອນ<br>• ສັ່ງຜະລິດບັນດາສິ່ງພິມຮັບໃຊ້ການຂາຍ, ສິ່ງພິມໂຄສະນາພາຍໃນ.<br>• ວຽກງານອື່ນໆຕາມການມອບໝາຍຂອງບໍລິສັດ. | • ເພດຍິງ ຫຼື ຊາຍ ອາຍຸບໍ່ເກີນ 35 ປີ<br>• ຈົບການສຶກສາລະດັບ ຊັ້ນສູງຂຶ້ນໄປ ສາຂາສື່ສານມວນຊົນ, ການຕະຫຼາດ, ບໍລິຫານທຸລະກິດ ຫຼື ສາຂາທີ່ກ່ຽວຂ້ອງ<br>• ມີແນວຄວາມຄິດສ້າງສັນ, ຮຽນຮູ້ສິ່ງໃໝ່ໆສະເໜີ<br>• ມີທັກສະໃນການນໍາສະເໜີ, ປະສານງານ<br>• ມີປະສົບການສາຍງານທີ່ກ່ຽວຂ້ອງ **ຈະພິຈາລະນາພິເສດ**.<br>• ມີແນວຄິດບໍ່ຢຸດຢັ້ງທີ່ຈະຍົກລະດັບ, ພັດທະນາໂຕເອງ ໂດຍການເຂົ້າຮ່ວມໃນກອງປະຊຸມຝຶກອົບຮົມ, ສໍາມະນາ...<br>• ມີທັກສະສ້າງສາຍພົວພັນ, ວິທີແກ້ໄຂບັນຫາທີ່ດີ. | • ລາຍຮັບ: ຕາມການເຈລະຈາຕົວຈິງເວລາສໍາພາດ.<br>• ມີປະກັນສັງຄົມ, ປະກັນສຸຂະພາບ<br>• ອຸດໜູນກິນເຂົ້າທ່ຽງ, ອຸດໜູນເດີນທາງໄປວຽກຕ່າງແຂວງ-ຕ່າງປະເທດ, ຄ່າໂທລະສັບທຸກເດືອນ<br>• ຂຶ້ນເງິນເດືອນ, ເງິນໂບນັສ ຕາມຄວາມສໍາເລັດຂອງທຸລະກິດ.<br>• ກວດສຸຂະພາບຮອບດ້ານທຸກໆປີ ແລະໄດ້ໄປທ່ອງທ່ຽວຕາມແຜນຂອງບໍລິສັດ.<br>• ໄດ້ເຂົ້າຮ່ວມບັນດາໂຄງການ, ການຝຶກອົບຮົມເພື່ອພັດທະນາໂຕເອງ.<br>• ແລະ ອີກຫຼາຍໆນະໂຍບາຍອື່ນຈາກ LAP ເຊັ່ນ: ເງິນເດືອນ 13, ລາງວັນທ້າຍປີ, ອຸດໜຸນບັນດາເທດສະການ, ວັນເກີດ, ເກີດລູກ, ເຈັບໄຂ້, ຊຸດເຄື່ອງແບບພະນັກງານ....<br>• ມີວັນພັກປະຈໍາປີ, ພັກເທດສະການ, ພັກກິດທຸລະ, ລາປ່ວຍ ຕາມກົດໝາຍແຮງງານກໍານົດ.<br>• ມີວຽກງານທີ່ໝັ້ນຄົງ. |

| | | | | | |
|---|---|---|---|---|---|
| | | | | | • ໄດ້ຮັບມິດຕະພາບທີ່ດີ, ມີຄວາມທ້າທາຍ, ເຮັດວຽກແບບມືອາຊີບ ແລະ ສະພາບແວດລ້ອມແບບສາກົນ. |

**II. ສະຖານທີ່ເຮັດວຽກ:** ສຳນັກງານໃຫຍ່ ຕັ້ງຢູ່ຊັ້ນສອງ, ຕຶກທະນາຄານ MBbank, ຖະໜົນ ໄກສອນ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ.

**III. ວິທີໃນການສະໝັກ**

- ສາມາດດາວໂຫຼດຟອມສະໝັກທີ່ Website: lap.com.la ຫຼື ເຂົ້າມາພົວພັນເອົາທີ່: ບໍລິສັດ ລ້ານຊ້າງ ປະກັນໄພ ມະຫາຊົນ ສຳນັກງານໃຫຍ່ ຕັ້ງຢູ່ຕັ້ງຢູ່ຊັ້ນສອງ, ຕຶກທະນາຄານ MBbank, ຖະໜົນ ໄກສອນ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ, ເບີໂທຕິດຕໍ່: 030 9029999
- ສາມາດສົ່ງຟອມສະໝັກມາທີ່ email: contact@lap.com.la ຫຼື ເຂົ້າມາສົ່ງທີ່: ຫ້ອງການສຳນັກງານໃຫຍ່.

**IV. ເອກະສານສະໝັກປະກອບມີ:**

- ໃບສະໝັກວຽກຂອງບໍລິສັດ (ຕ້ອງມີ)
- ຊີວະປະຫວັດ ພາສາລາວ/ອັງກິດ
- ປາກາສະນີຍະບັດ, ໃບຈົບຊັ້ນວິສາສະເພາະ... ສະບັບກ໊ອບປີ້.
- ບັດປະຈຳຕົວ, ພາສປອດ ສະບັບກ໊ອບປີ້
- ເອກະສານອື່ນໆທີກ່ຽວຂ້ອງ.

***ສົນໃຈສອບຖາມເພີ່ມເຕີມທີ່ເບີ:*** *020 59880552, ທ່ານ ນາງ ຄຳຫຼ້າ ແກ້ວວົງສາ*

***ໝາຍເຫດ:*** *ເລີ່ມເປີດຮັບສະໝັກ* ***ຈົນເຖິງວັນທີ 15/02/2026***

*(ຮັບຟອມ ແລະ ສົ່ງຟອມຢູ່ບໍລິສັດໄດ້ຕາມໂມງລັດຖະການ ວັນຈັນ ຫາ ວັນສຸກ)*